## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 14 ສິງຫາ 2022 (08-14-2022)

---

## ໃຫ້ກຽດເພື່ອນບ້ານຂອງທ່ານ

*ເມື່ອໃດທີ່ທ່ານໄດ້ຮຽນຮູ້ບາງຢ່າງຈາກການເບິ່ງຄົນອື່ນເຮັດ?*

**ຈຸດສຳຄັນໃນບົດຮຽນ:** ຄວາມຮັກແມ່ນເຫັນໄດ້ໃນວິທີທີ່ເຮົາໃຫ້ກຽດຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຈູເລັຽ ຈາຍດ໌ (Julia Child) ຈະມີບຸກຄະລິກກະພາບໃນການເຮັດອາຫານທີ່ຫຼາກຫຼາຍສເມີ. ນາງເປັນແມ່ຄົວໃນໂທລະທັດຜູ້ບຸກເບີກທີ່ສືບຕໍ່ສ້າງແຮງບັນດານໃຈໃຫ້ຊາວອາເມຣິກັນທຸກເພດທຸກວັຍໃຫ້ຮັບເອົາຄວາມສຸກຂອງການປຸງແຕ່ງອາຫານ. ມັນບໍ່ແມ່ນພຽງແຕ່ເປັນຄວາມຊໍານານຂອງນາງກັບສູດທີ່ສັບສົນ; ມັນເປັນວິທີທີ່ນາງຕອບສນອງຕໍ່ຄວາມຜິດພາດຂອງຕົນເອງທີ່ເຮັດໃຫ້ນາງໄດ້ມີທັງການສຶກສາແລະຄວາມບັນເທີງ.

ບາງທີສິ່ງທີ່ເຮັດໃຫ້ນາງເປັນທີ່ນິຍົມແມ່ນວິທີທີ່ນາງເຮັດໃຫ້ທ່ານມີຄວາມຮູ້ສຶກຄືກັບວ່າທ່ານສາມາດໂດດເຂົ້າໄປແລະພະຍາຍາມລອງເຮັດໃນສິ່ງດຽວກັນ. ນາງໄດ້ສອນທ່ານວິທີການແຕ່ງອາຫານທີ່ໜ້າກິນ, ແບບມືອາຊີບເປັນຕາມລະດັບຂັ້ນຕອນ. ພວກຄູສອນທີ່ດີທີ່ສຸດແມ່ນຜູ້ທີ່ບໍ່ພຽງແຕ່ບອກໃຫ້ທ່ານເຮັດ; ພວກເຂົາສະແດງໃຫ້ທ່ານເຫັນວິທີເຮັດມັນດ້ວຍ.

ໃນພຣະທັມໂຣມ, ທ່ານໂປໂລໄດ້ເຮັດແນວນັ້ນ. ສຳລັບສິບເອັດບົດ, ທ່ານໄດ້ມອບທິສດີທີ່ສົມບູນທີ່ສຸດຂອງຄວາມລອດໃນພຣະຄັມພີໃຫ້ແກ່ພວກເຮົາ. ຫຼັງຈາກນັ້ນ, ໃນໂຣມ ບົດ 12, ທ່ານໄດ້ສະແດງວິທີການດຳເນີນຊີວິດໃນຄວາມລອດນັ້ນແກ່ພວກເຮົາ. ແຮງບັນດານໃຈຈາກຄວາມເມດຕາຂອງພຣະເຈົ້າກະຕຸ້ນເຮົາໃຫ້ຖວາຍຕົວເຮົາເອງເປັນເຄື່ອງບູຊາທີ່ມີຊີວິດ, ເປັນເຄື່ອງບູຊາຝ່າຍຈິດວິນຍານ. ໃນຂໍ້ທີ 9-21, ເຮົາເຫັນວ່າຊີວິດຂອງການນະມັສການສະແດງອອກເມື່ອເຮົາຮັກແລະໃຫ້ກຽດຄົນອື່ນ. ມື້ນີ້, ພວກເຮົາຈະຮຽນຮູ້ສູດດັ່ງກ່າວ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ໂຣມ 12:9-13</u>

*9. ຈົ່ງຮັກດ້ວຍໃຈຈິງ ຈົ່ງກຽດຊັງສິ່ງທີ່ຊົ່ວຮ້າຍ ຈົ່ງຍຶດໝັ້ນໃນສິ່ງທີ່ດີ. 10. ຈົ່ງຮັກຊຶ່ງກັນແລະກັນເໝືອນສັນພີ່ນ້ອງ ສ່ວນການໃຫ້ກຽດຊຶ່ງກັນແລະກັນນັ້ນຈົ່ງຖືວ່າຜູ້ອື່ນດີກວ່າຕົນ. 11. ຈົ່ງເຮັດວຽກຢ່າງເຕັມກຳລັງ ແລະຢ່າກຽດຄ້ານ ຈົ່ງຮັບໃຊ້ອົງພຣະຜູ້ເປັນເຈົ້າ ຈົ່ງມີຈິດໃຈຮ້ອນຮົນດ້ວຍພຣະວິນຍານ. 12. ຈົ່ງຊົມຊື່ນຍິນດີໃນຄວາມຫວັງ ຈົ່ງອົດທົນໃນຄວາມຍາກລຳບາກ ຈົ່ງພາວັນນາອະທິຖານຢູ່ບໍ່ຂາດ. 13. ຈົ່ງຊ່ອຍເຫຼືອໄພ່ພົນຂອງພຣະເຈົ້າເມື່ອພວກເຂົາຂັດສົນ ຈົ່ງຍິນດີຕ້ອນຮັບແຂກດ້ວຍໃຈເຫຼື້ອມໃສ.*

ໃນ 1 ໂກຣິນໂທ ບົດ13 ທ່ານໂປໂລໄດ້ເປີດສາກ ອະທິບາຍການປະຕິບັດຂອງຄວາມຮັກ, ຫຼັງຈາກການແນະນຳຊາວຄຣິສະຕຽນທີ່ເມືອງໂກຣິນໂທກ່ຽວກັບຂອງປະທານຝ່າຍວິນຍານໃນບົດທີ 12. ທ່ານໄດ້ເຮັດແບບດຽວກັນໃນໂຣມ ບົດທີ 12: ຫຼັງຈາກການແນະນຳພວກເຂົາເຈົ້າກ່ຽວກັບຂອງປະທານຕ່າງໆຝ່າຍວິນຍານ (ຂໍ້ທີ 3-8), ໂປໂລໄດ້ອະທິບາຍວ່າເຂົາເຈົ້າຮັກກັນແນວໃດ. ໂດຍການພິຈາລະນາເຖິງເຣື່ອງນີ້ທ່ານໄດ້ຂຽນຈົດໝາຍສອງສະບັບທີ່ແຕກຕ່າງກັນ, ພວກເຮົາກໍພໍຮູ້ໄດ້ວ່າເຣື່ອງນີ້ມີຄວາມສຳຄັນແນວໃດຕໍ່ອັຄສາວົກ. ມັນຄືກັບວ່າທ່ານຕ້ອງການໃຫ້ພວກເຮົາຈື່ຈຳຈຸດປະສົງຂອງ "ພາບໃຫຍ່" ຂອງປະທານຝ່າຍວິນຍານຂອງພວກເຮົາ: ການໃຊ້ພວກມັນ

ເພື່ອໃຫ້ບັນລຸພຣະບັນຍັດຂໍ້ຍິ່ງໃຫຍ່ທີ່ສຸດຂອງຄວາມຮັກພຣະເຈົ້າແລະຮັກເພື່ອນບ້ານ (ມທ 22:37-39).

ເລີ່ມຕົ້ນດ້ວຍຂໍ້ທີ 9, ມັນອາດຈະຟັງຄືວ່າໂປໂລໄດ້ໃຫ້ຄຳສັ່ງເປັນລ່າງລຳດັບແກ່ກັບພວກເຮົາ, ແຕ່ລະອັນກໍບອກພວກເຮົາເຖິງວິທີການຮັກເພື່ອນບ້ານຄືກັບຕົວເຮົາເອງ. ແລະແຕ່ລະອັນກໍມີຄວາມສຳຄັນ. ເມື່ອໂປໂລເວົ້າວ່າ, “ໃຫ້ຄວາມຮັກບໍ່ມີຄວາມໜ້າຊື່ໃຈຄົດ,” ທ່ານກະຕຸ້ນເຮົາໃຫ້ມີຫົວໃຈທີ່ບໍຣິສຸດ, ບໍ່ເຮັດໃນສິ່ງທີ່ເບິ່ງຄືວ່າຮັກເພື່ອເຫັນແກ່ຕົວ ຫຼືເພື່ອຈູງໃຈທີ່ບໍ່ດີເຊັ່ນການຫາຜົນປໂຍດຫຼືຫຼີກລ້ຽງຄວາມບໍ່ພໍໃຈ.

ນີ້ແຕກຕ່າງຈາກການສະແດງຄວາມຮັກເຖິງແມ່ນວ່າໃນເວລາທີ່ພວກເຮົາບໍ່ມີຄວາມຮູ້ສຶກຮັກ. ຂໍ້ທີ 9 ໝາຍເຖິງແຮງຈູງໃຈຂອງພວກເຮົາ. ເຮົາເຮັດສິ່ງທີ່ຖືກຕ້ອງດ້ວຍເຫດຜົນທີ່ຖືກຕ້ອງຫຼືເພື່ອປໂຍດຂອງເຮົາເອງ-ຟີລິບປອຍ 2:3 ເອີ້ນວ່າ “ຄວາມທະເຍີທະຍານທີ່ເຫັນແກ່ຕົວ” ດ້ວຍໃຈບໍລິສຸດ, ເຮົາສາມາດຮັກສິ່ງທີ່ພຣະເຈົ້າຮັກແລະຫຼີກລ້ຽງສິ່ງທີ່ຜິດ. ດ້ວຍຫົວໃຈອັນບໍລິສຸດ, ພວກເຮົາສາມາດເຮັດໄດ້.

*ຄຳສັ່ງໃດທີ່ທ່ານເຫັນວ່າງ່າຍກວ່າ ທີ່ທ່ານຈະເຊື່ອຟັງ ແລະຂໍ້ໃດທີ່ທ້າທາຍກວ່າ?*

*ຈົ່ງຮັກຊຶ່ງກັນແລະກັນເໝືອນສັນພີ່ນ້ອງ ສ່ວນການໃຫ້ກຽດຊຶ່ງກັນແລະກັນນັ້ນຈົ່ງຖືວ່າຜູ້ອື່ນດີກວ່າຕົນ.* ຂໍ້ທີ 10 ຂໍ້ບັນຍັດຕ່າງໆ ແລະຄຳຄິດເຫັນບາງສິ່ງທີ່ທ່ານຈະບໍ່ພົບເຫັນໃນບ່ອນອື່ນໃນພຣະຄັມພີ: ການແຂ່ງຂັນລະຫວ່າງພີ່ນ້ອງໃນພຣະຄຣິດ. ແຕ່ການແຂ່ງຂັນນີ້ບໍ່ແມ່ນເພື່ອຜົນປໂຍດ ຫຼືກຽດສັກສີຂອງພວກເຮົາ. ແທນທີ່ຈະ, ພວກເຮົາກຳລັງຊອກຫາວິທີທີ່ຈະໃຫ້ກຽດເຊິ່ງກັນແລະກັນ. "ເປັນຜູ້ນຳໃນການໃຫ້ກຽດເຊິ່ງກັນແລະກັນ." ໃນຂໍ້ທີ 13, ໂປໂລເຮັດໃຫ້ມັນຊັດເຈນວ່າຄວາມສັມພັນເຫຼົ່ານັ້ນຍັງໝາຍຄວາມວ່າພວກເຮົາພິຈາລະນາທຸກສິ່ງທີ່ພວກເຮົາເປັນເຈົ້າຂອງເປັນໂອກາດທີ່ ຈະຮັບໃຊ້ເຊິ່ງກັນແລະກັນ, ການສະແດງ "ຕ້ອນຮັບແຂກ." ໂປໂລຍັງໄດ້ສັ່ງຊາວກຸງໂຣມໃຫ້ “ຊ່ວຍໄພ່ພົນຂອງພຣະເຈົ້າເມື່ອເຂົາຂັດສົນ,” ເຖິງແມ່ນວ່າມັນບໍ່ສະດວກ. ເຮົາໃຫ້ກຽດຄົນອື່ນໂດຍການຮັບໃຊ້ເຂົາເຈົ້າດ້ວຍຄວາມຮັກ.

ຢູ່ລະຫວ່າງກາງຄຳສັ່ງສຸມໃຈໃສ່ວິທີທີ່ພວກເຮົາປະຕິບັດກັບຄົນອື່ນ, ໂປໂລໄດ້ກ່າວກັບຜູ້ເຊື່ອຖືຊາວໂຣມໃນຂໍ້ທີ 11-12: "*ຈົ່ງເຮັດວຽກຢ່າງເຕັມກຳລັງ ແລະຢ່າກຽດຄ້ານ ຈົ່ງຮັບໃຊ້ອົງພຣະຜູ້ເປັນເຈົ້າ ຈົ່ງມີຈິດໃຈຮ້ອນຮົນດ້ວຍພຣະວິນຍານ. ຈົ່ງຊົມຊື່ນຍິນດີໃນຄວາມຫວັງ ຈົ່ງອົດທົນໃນຄວາມຍາກລຳບາກ ຈົ່ງພາວັນນາອະທິຖານຢູ່ບໍ່ຂາດ.*” ຂໍ້ທີ 11-12 ຕ້ອງໄດ້ຮັບການອ່ານໃນແງ່ຂອງວິທີການຮັກຄົນອື່ນໆ. ມັນຈະເຮັດໃຫ້ເຫັນຄວາມແຕກຕ່າງ!" “ການຮັກເພື່ອນບ້ານເໝືອນຮັກຕົວເອງນີ້” ທຸຣະກິດນີ້ບໍ່ແມ່ນໃຫ້ສູນເສັຽໃຈຈົນເປັນລົມ! ມັນຮຽກຮ້ອງໃຫ້ເອົາຈິດວິນຍານສຸມໃສ່ເທິງຄວາມຫວັງຂອງພຣະເຈົ້າເຖິງວ່າຈະມີຄວາມທໍ້ຖອຍໃຈ, ອົດທົນກັບຜູ້ອື່ນທີ່ຂົ່ມເຫັງພວກເຮົາ, ແລະການບໍ່ຍອມຖອຍໃນການທູນຂໍໃຫ້ພຣະເຈົ້າແຊກແຊງໃນສະຖານະການຕ່າງໆຂອງພວກເຮົາ. ການຮັກຊຶ່ງກັນແລະກັນຮຽກຮ້ອງໃຫ້ພວກເຮົາສະແດງການໃຫ້ກຽດໂດຍການມອບຕົວເອງເຖິງແມ່ນວ່າເປັນການສູນເສັຽຂອງສ່ວນຕົວ.

## 2. <u>ໂຣມ 12:14-16</u>

*14. ຈົ່ງອວຍພອນແກ່ຄົນທີ່ຂົ່ມເຫັງເຈົ້າ ຈົ່ງອວຍພອນຢ່າປ້ອຍດ່າ. 15. ຈົ່ງຊົມຊື່ນຍິນດີກັບຜູ້ທີ່ຊົມຊື່ນຍິນດີ ຈົ່ງຮ້ອງໄຫ້ກັບຜູ້ທີ່ຮ້ອງໄຫ້. 16. ຈົ່ງເປັນນໍ້າໜຶ່ງໃຈດຽວກັນ ຢ່າຄິດອວດໃຫຍ່ໃຝ່ສູງ ຈົ່ງຮັບຮູ້ຄົນສາມັນຕໍ່າຕ້ອຍ ແລະຢ່າຖືວ່າຕົນເປັນຄົນສລາດ.*

ເມື່ອພວກເຮົາພິຈາລະນາອົງປະກອບທາງວິນຍານສຳລັບການຮັກຄົນອື່ນຄືກັບຕົວເຮົາເອງ, ຄວາມຖ່ອມຕົວເປັນສິ່ງຈຳເປັນ. ການເດີນໄປໃນຄວາມຖ່ອມຕົວແມ່ນການມີຈິດໃຈຂອງພຣະຄຣິດ. ຄວາມຖ່ອມຕົວທີ່ຖືພຣະຄຣິດເປັນຈຸດໝາຍເຖິງການອົດທົນຕໍ່ຄວາມບໍ່ຍຸຕິທັມ ແລະ ການຕອບສນອງດ້ວຍໃຫ້ພອນແກ່ຜູ້ທີ່ເຮັດຜິດຕໍ່ເຮົາ. ຊາວຄຣິສະຕຽນສ່ວນໃຫຍ່ໃນອາເມຣິກາບໍ່ມີປະສົບການກັບການກົດຂີ່ຂົ່ມເຫັງ…ແຕ່ພວກເຮົາມີເຫດຜົນທີ່ຈະກຽມພ້ອມ (2 ຕີໂມທຽວ 3:12). ໃຫ້ພວກເຮົາພິຈາລະນາວິທີການຄຳສັ່ງເຫຼົ່ານີ້ນຳໃຊ້ກັບພວກເຮົາໃນປະຈຸບັນ. ທ່ານມີປະຕິກິລິຍາແນວໃດເມື່ອທ່ານໄດ້ຮັບໜ້ອຍກວ່າທີ່ທ່ານຄິດວ່າທ່ານສົມຄວນ? ຖ້ອຍຄຳໃດທີ່ອອກມາຈາກໃຈທ່ານ

ແລະອອກຈາກປາກຂອງທ່ານ? ຂໍ້ທີ 14 ຂໍໃຫ້ພວກເຮົາເລືອກຄໍາຕອບໃນເວລາທີ່ພວກເຮົາຖືກປະຕິບັດຢ່າງບໍ່ຍຸຕິທັມ: ພວກເຮົາສາມາດອວຍພອນ, ຫຼືພວກເຮົາສາບແຊ່ງ.

ສ່ວນໃຫຍ່ພວກເຮົາມັກຈະບໍ່ຄິດວ່າຄໍາເວົ້າຂອງພວກເຮົາເປັນຄໍາອວຍພອນຫຼືຄໍາສາບແຊ່ງ, ບາງທີອາດຈະເປັນຍ້ອນວ່າພວກເຮົາມີທັສນະທີ່ຄັບແຄບຂອງທັງສອງຢ່າງນີ້. ຈົ່ງອວຍພອນ, ໃນກໍລະນີນີ້, ແມ່ນເພື່ອຂໍໃຫ້ພຣະເຈົ້າປະທານບາງຢ່າງທີ່ດີແກ່ຄົນອື່ນໆ. ໂດຍພື້ນຖານແລ້ວ, ມັນແມ່ນຄວາມປາຖນາຂອງພຣະເຈົ້າສໍາລັບຄົນອື່ນ. ການສາບແຊ່ງແມ່ນຄວາມປາຖນາສໍາລັບການພິພາກສາຂອງພຣະເຈົ້າຕໍ່ໃຜຜູ້ນຶ່ງຫຼືການປະກາດການກ່າວໂທດ. ຄໍາສາບແຊ່ງສາມາດເຂົ້າມາໃນຫຼາຍຮູບແບບ. ເຈົ້າຈະເສັຽໃຈຕໍ່ສິ່ງອັນນີ້. ເຈົ້າຈະບໍ່ມີຄ່າຫຍັງເລີຍ, ຂ້ອຍຢາກໃຫ້ລາວໃຊ້ກັມນີ້. ແນວໃດກໍ່ຕາມ, ເມື່ອເຮົາອວຍພອນຄົນອື່ນ, ເຮົາສະທ້ອນເຖິງຄວາມຖ່ອມຕົວຂອງພຣະເຢຊູ. ພວກເຮົາໄວ້ວາງໃຈພຣະເຈົ້າໃຫ້ກະທໍາການຕາງໜ້າຂອງພວກເຮົາ.

ຂໍ້ທີ 15 ບອກພວກເຮົາໃຫ້ສ້າງຄວາມສຸກແລະຄວາມໂສກເສົ້າຂອງຄົນອື່ນເໝືອນເປັນຂອງຕົນເອງ. ເປັນເຣື່ອງໜ້າເສັຽດາຍທີ່ບາງຄັ້ງເຮົາສາມາດໄວ້ທຸກກັບຄົນອື່ນໃນຄວາມໂສກເສົ້າໄດ້ງ່າຍກວ່າທີ່ເຮົາຈະສະເຫຼີມສະຫຼອງໃນຄວາມສຸກຂອງເຂົາເຈົ້າ. ການສະຫຼອງຄວາມສຸກຂອງພວກເຂົາຮຽກຮ້ອງໃຫ້ມີຄວາມຖ່ອມຕົວໃນການລືມຕົວເຮົາເອງເພື່ອເບິ່ງຄວາມປາຖນາທີ່ຜ່ານມາຂອງພວກເຮົາ, ຕໍ່ຕ້ານການປຽບທຽບ, ແລະຮັກເພື່ອນບ້ານຂອງພວກເຮົາຫຼາຍຈົນ "ຊະນະ" ຂອງເຂົາເຈົ້າເປັນຄວາມຮູ້ສຶກຄືກັບຂອງພວກເຮົາ.

ໃນທີ່ສຸດ, ທ່ານໂປໂລໄດ້ຂະຫຍາຍຄໍາສັ່ງໄປຕື່ມອີກ. ເຮົາຕ້ອງຮັກຄົນທີ່ໂລກອາດເອີ້ນວ່າບໍ່ສໍາຄັນ ຫຼືບໍ່ມີຄຸນຄ່າ. ພວກເຮົາຈະສະແດງການໃຫ້ກຽດຕໍ່ພວກທີ່ບໍ່ມີຫຍັງຈະຕອບແທນເຮົາ. ເມື່ອພວກເຮົາພິຈາລະນາຮັບຄົນອື່ນໆ, ການໃຫ້ກຽດພວກເຂົາເຈົ້າດ້ວຍຄໍາເວົ້າທີ່ເປັນພຣະພອນ, ຮ່ວມຮັບບັນຫາໜັກໜ່ວງຂອງພວກເຂົາເຈົ້າ, ແລະປິຕິຍິນດີໃນຄວາມສໍາເລັດຂອງພວກເຂົາເຈົ້າ, ພວກເຮົາຈະພົບການຢູ່ຮ່ວມກັນຢ່າງສັນຕິຕໍ່ຊຶ່ງກັນແລະກັນ. ແນ່ນອນ, ພວກເຮົາຈະບໍ່ສາມາດກະທໍາສິ່ງເຫຼົ່ານີ້ຢ່າງສົມບູນແບບ, ເໝືອນຢ່າງພຣະຄຣິດໄດ້ກະທໍາ, ແຕ່ວ່າພວກເຮົາສາມາດຫຼຸ້ມເຫລຄວາມຕັ້ງໃຈບໍ່ໃຫ້ໂນ້ມໄປສູ່ຄວາມອວດຕົວທີ່ຈະເຮັດໃຫ້ພວກເຮົາອອກຈາກການຮັກຄົນອື່ນ.

*ຄວາມຖ່ອມຕົວສົ່ງເສີມຄວາມສາມັກຄີໃນຄຣິສຕະຈັກແນວໃດ?*

## 3. <u>ໂຣມ 12:17-21</u>

*17. ຢ່າເຮັດຊົ່ວຕອບແທນການຊົ່ວແກ່ຜູ້ໃດຜູ້ນຶ່ງ ຈົ່ງພຍາຍາມເຮັດໃນສິ່ງທີ່ຄົນທັງຫຼາຍເຫັນວ່າດີ. 18. ຖ້າເປັນໄປໄດ້ ໃນເຣື່ອງທີ່ຂຶ້ນຢູ່ກັບພວກເຈົ້ານັ້ນ ຈົ່ງຢູ່ຢ່າງສງົບສຸກກັບທຸກໆຄົນ. 19. ພວກທີ່ຮັກຂອງເຮົາເອີຍ, ຢ່າແກ້ແຄ້ນເລີຍ, ແຕ່ຈົ່ງມອບການນັ້ນໃຫ້ພຣະເຈົ້າເປັນຜູ້ພິພາກສາລົງໂທດແທນ, ເພາະມີຄໍາຂຽນໄວ້ໃນພຣະຄັມພີຂອງອົງພຣະຜູ້ເປັນເຈົ້າວ່າ,"ການແກ້ແຄ້ນເປັນທຸຣະຂອງເຮົາ ເຮົາເອງຈະເປັນຜູ້ຕອບແທນ." 20. ແຕ່ "ຖ້າສັດຕຣູຂອງເຈົ້າຢາກເຂົ້າ ຈົ່ງເອົາໃຫ້ເຂົາກິນ ຖ້າເຂົາຫິວນໍ້າ ຈົ່ງເອົາໃຫ້ເຂົາດື່ມ ເພາະການທີ່ເຈົ້າເຮັດຢ່າງນັ້ນ ເປັນການກອງຖ່ານໄຟແດງໃສ່ໄວ້ເທິງຫົວຂອງເຂົາ." 21. ຢ່າໃຫ້ຄວາມຊົ່ວໄດ້ຊະນະເຈົ້າ ແຕ່ຈົ່ງຊະນະຄວາມຊົ່ວດ້ວຍຄວາມດີ.*

ໂປໂລໄດ້ສືບຕໍ່ດ້ວຍຄໍາສັ່ງຂອງທ່ານກ່ຽວກັບວິທີທີ່ພວກເຮົາຮັກຊຶ່ງກັນແລະກັນໂດຍການຮຽກຮ້ອງພວກເຮົາໃຫ້ກຽດເຊິ່ງກັນແລະກັນໂດຍຜ່ານຄວາມສັມພັນທີ່ສງົບສຸກ. ນັ້ນໝາຍຄວາມວ່າ ເມື່ອເຮົາໃຫ້ກຽດຄົນອື່ນ, ຮັກເຂົາເຈົ້າຢ່າງຖ່ອມຕົວ, ແລະສະແດງຄວາມຕ້ອນຮັບແຂກ, ມັນບໍ່ມີບ່ອນທີ່ຈະແກ້ແຄ້ນ! ໂປໂລເນັ້ນຈຸດນີ້ໂດຍອ້າງເຖິງເພງນຶ່ງທີ່ໂມເຊໄດ້ຂຽນໄວ້ບໍ່ດົນກ່ອນຕາຍ. *"ການແກ້ແຄ້ນເປັນທຸຣະຂອງເຮົາ ເຮົາເອງຈະເປັນຜູ້ຕອບແທນ."* (ພຣະບັນຍັດສອງ 32:35), ໃນເພງນີ້, ໂມເຊໄດ້ບັນລະຍາຍຄໍາໝັ້ນສັນຍາຂອງພຣະຜູ້ເປັນເຈົ້າຕໍ່ປະຊາຊົນຂອງພຣະອົງ; ພຣະອົງຈະແກ້ແຄ້ນຄວາມຜິດທັງໝົດທີ່ໄດ້ເຮັດຕໍ່ພວກເຂົາເຈົ້າ. ໂມເຊໄດ້ບອກຊາວອິສຣາເອນວ່າພຣະເຈົ້າຈະແກ້ແຄ້ນແທນລູກໆຂອງພຣະອົງ. ສ່ວນໃຫຍ່, ພວກເຮົາມີບັນຫາໃນການປ່ອຍວາງການກະທໍາຜິດທີ່ຄົນອື່ນໄດ້ເຮັດຕໍ່ເຮົາເພາະວ່າພວກເຮົາຄິດວ່ານັ້ນໝາຍເຖິງພວກເຮົາບໍ່ສົນໃຈມັນຫຼືແມ້ກະທັ້ງຍອມຮັບມັນ. ແຕ່ນັ້ນບໍ່ແມ່ນສັນຍານຂອງການໃຫ້ອະພັຍ.

ແທນທີ່ຈະ, ມັນໝາຍຄວາມວ່າພວກເຮົາກຳລັງຄອຍຖ້າໃຫ້ພຣະຜູ້ເປັນເຈົ້າກະທຳການໃຫ້ມັນຖືກຕ້ອງແທນພວກເຮົາ.

*ຂໍ້ຄວາມເຫຼົ່ານີ້ຂັດກັບສິ່ງທີ່ເຮົາເຫັນຢູ່ໃນໂລກທຸກມື້ນີ້ແນວໃດ?*

ພວກເຮົາບໍ່ສາມາດເລືອກວ່າຜູ້ອື່ນຕອບສະໜອງແນວໃດ, ແຕ່ເຮົາສາມາດເລືອກທັສນະແລະການກະທຳຂອງເຮົາເອງ. ຫຼັງຈາກທີ່ເຮົາມອບການແກ້ແຄ້ນໃນມືຂອງອົງພຣະຜູ້ເປັນເຈົ້າແລ້ວ, ພວກເຮົາກໍອວຍພອນຜູ້ທີ່ເຮັດຜິດຕໍ່ເຮົາໂດຍການຊ່ອຍໃນຄວາມຈຳເປັນຂອງພວກເຂົາ. ທັສນະແລະການກະທຳແນວນີ້ມັນຝືນຕໍ່ກົດທັມມະຊາດໂດຍທົ່ວໆໄປ, ແຕ່ວ່າພວກເຮົາບໍ່ໄດ້ຄາດຫວັງວ່າຈະເຮັດສິ່ງເຫຼົ່ານີ້ດ້ວຍຕົວພວກເຮົາເອງ. ພວກເຮົາຕ້ອງການພຣະວິນຍານຂອງພຣະເຈົ້າທີ່ຈະປະທານອຳນາດແກ່ພວກເຮົາ.

ໂປໂລໄດ້ອ້າງເຖິງພຣະທັມສຸພາສິດ 25:21-22 ເພື່ອໃຫ້ແນ່ໃຈວ່າເມື່ອພວກເຮົາຮັກແລະສະແດງຄວາມເມດຕາຕໍ່ສັດຕູຂອງພວກເຮົາ, ມັນຄືກັບວ່າ "*ເປັນການກອງຖ່ານໄຟແດງໃສ່ໄວ້ເທິງຫົວຂອງເຂົາ.*". "ຄວາມບໍ່ພໍໃຈກັບຄຳເວົ້ານີ້ແມ່ນໜ້າສົນໃຈ: ພວກເຮົາດຳເນີນໃນຄວາມຮັກ, ການຍອມຈຳນົນມອບການແກ້ແຄ້ນທັງປວງຕໍ່ພຣະເຈົ້າ, ແລະສະແດງການໃຫ້ກຽດແກ່ຜູ້ທີ່ບໍ່ສົມຄວນຈະໄດ້ຮັບ, ເມື່ອພວກເຮົາເຮັດເຊັ່ນນັ້ນ, ພຣະເຈົ້າໃຊ້ຄວາມຖ່ອມຕົວເພື່ອພິສູດວ່າພວກເຮົາຖ່ອມຕົວ! ພວກເຮົາຕ້ອງ "ເອົາຊະນະຄວາມຊົ່ວດ້ວຍຄວາມດີ. "ນີ້ແມ່ນວິທີທີ່ພວກເຮົາໄດ້ຮັບການປົດປ່ອຍຈາກການບໍ່ໃຫ້ອະພັຍທີ່ເປັນອັນຕະລາຍຕໍ່ຄວາມສັມພັນຕ່າງໆຂອງພວກເຮົາ, ພະຍານຂອງພວກເຮົາ, ແລະແມ້ກະທັ້ງສຸຂພາບຂອງພວກເຮົາດ້ວຍ.

*ແມ່ນຫຍັງຄືບົດບາດຂອງກຸ່ມພວກເຮົາທີ່ສາມາດຊ່ວຍເຫຼືອເຊິ່ງກັນແລະກັນໃຫ້ຢູ່ຢ່າງສງົບສຸກກັບທຸກໆຄົນ?*

## ນຳໃຊ້ໃນຊີວິດ

ຄວາມຮັກແມ່ນເຫັນໄດ້ໃນວິທີທີ່ເຮົາໃຫ້ກຽດຄົນອື່ນ. ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ສະທ້ອນໃຫ້ເຫັນ.** ເລີ້ມຕົ້ນດ້ວຍຫົວໃຈຂອງທ່ານ. ກວດເບິ່ງຄວາມກະຕຸ້ນໃຈສຳລັບການກະທຳຕ່າງໆຂອງທ່ານ-ທ່ານໄດ້ສຸມໃຈໃສ່ຜົນດີຂອງທ່ານຫຼືຜົນດີຂອງຄົນອື່ນ? ຂໍໃຫ້ພຣະເຈົ້າປະທານອຳນາດແກ່ທ່ານທີ່ຈະຮັກຄົນອື່ນດ້ວຍຫົວໃຈທີ່ບໍຣິສຸດທີ່ອຸທິດຕໍ່ຜົນດີຂອງຄົນອື່ນໆ.
- **ໃຫ້ກຽດໝູ່.** ຂຽນທິດທາງສະເພາະທີ່ທ່ານສາມາດໃຫ້ກຽດໝູ່ເພື່ອນຢ່າງໜ້ອຍສາມຄົນຫຼືສະມາຊິກໃນຄອບຄົວໃນອາທິດນີ້, ຫຼັງຈາກນັ້ນເອົາວິທີການດັ່ງກ່າວເຂົ້າໄປໃນການປະຕິບັດ.
- **ໃຫ້ກຽດສັດຕູ.** ຂຽນທິດທາງຕ່າງໆທີ່ທ່ານສາມາດໃຫ້ກຽດຜູ້ທີ່ໄດ້ດູຖູກຫຼືທຳຮ້າຍຮ່າງກາຍທ່ານ, ແລະເອົາຢ່າງໜ້ອຍທາງນຶ່ງໃນທາງເຫຼົ່ານັ້ນໄປປະຕິບັດໃນອາທິດນີ້. ອັນນີ້ແມ່ນຍາກຫຼາຍ, ແຕ່ວ່າທ່ານສາມາດເຮັດມັນໄດ້!

ພວກເຮົາອາດຈະບໍ່ມີຊື່ສຽງເປັນທີ່ຮູ້ຈັກດີຄືກັນກັບອັຄສາວົກໂປໂລ, ແຕ່ວ່າພວກເຮົາທຸກຄົນສາມາດຮູ້ຈັກແລະສະແດງຄວາມຊົມຊື່ນຍິນດີຂອງການຮັກແລະການໃຫ້ກຽດ. ໃຫ້ພວກເຮົາເຕີບໂຕຂຶ້ນໃນຄວາມຊຳນານຂອງການຮັກຄົນອື່ນໆໃຫ້ດີຂຶ້ນໂດຍການໃຫ້ກຽດແກ່ພວກເຂົາເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**